Kremen School of Education and Human Development

ພໍ່ແມ່/ຢູ້ປົກຄອງທີ່ນັບຖື,

ເທີມນີ້, ຫ້ອງຮຽນຂອງລູກທ່ານຈະໄດ້ປະສານງານກັບ ______________________________ , ຊຶ່ງເປັນນັກຮຽນອົບຮົມຄຣູ ຈາກໂຄງການຢັ້ງຢືນການສອນຂອງໂຮງຮຽນມະຫາໄລວິທຍາໄລເມືອງເຟຣສໂນ. ຂະບວນການຢັ້ງຢືນການສອນ ຂອງໂຮງຮຽນມະຫາວິທຍາໄລເມືອງເຟຣສໂນໄດ້ກຳນົດໃຫ້ຜູ້ສມັຄໃບຢັ້ງຢືນຄຣູທຸກຄົນໄດ້ສຳເຣັດການປະເມີນຜົນການປະຕິບັດງານຄຣູ (Teacher Performance Assessment). ການປະເມີນຜົນນີ້ຕ້ອງໄດ້ໃຊ້ບົດບັນທຶກວີດີໂອບົດຮຽນນຶ່ງທີ່ສອນໂດຍນັກຮຽນອົບຮົມຄຣູຊຶ່ງມີຄວາມຍາວ 20 - 45 ນາທີ.

ຈຸດປະສົງຂອງບົດຮຽນບັນທຶກວີດີໂອນັ້ນ ແມ່ນ ເພື່ອປະເມີນການປະບັດງານຂອງນັກຮຽນອົບຮົມຄຣູ ແລະ ກໍ່ເພື່ອ ການປະເມີນຜົນໂຄງການຂອງພວກເຮົາຢ່າງມີປະສິດຕິຜົນ. ເຖິງແມ່ນວ່າໃນວີດີໂອອາດຈະເຫັນນັກຮຽນອົບຮົມຄຣູ ພ້ອມກັບ ນັກຮຽນທົ່ວກໍ່ຕາມ, ແຕ່ຈຸດປະສົງຫລັກ ແມ່ນ ເນັ້ນໃສ່ການສິດສອນຂອງນັກຮຽນອົບຮົມຄຣູ, ບໍ່ແມ່ນນັກຮຽນທົ່ວໄປໃນຫ້ອງຮຽນ.

ນັກຮຽນອົບຮົມຄຣູໃນໂຮງຮຽນມະຫາວິທຍາໄລເມືອງເຟຣສໂນທຸກຄົນຕ້ອງໄດ້ມີບັນຊີເວັບໄຊທ໌ https://fresnostate.tk20.com, ຣະຫັດຜ່ານ (ເຜສເວີດ) ແລະ ເວັບໄຊທ໌ໝັ້ນຄົງບ່ອນທີ່ຈະບັນທຶກວີດີໂອໄວ້ສະເພາະພະນັກງານການສຶກສາຄຣູ ແລະ ນັກຮຽນອົບຮົມຄຣູຂອງໂຮງຮຽນມະຫາວິທຍາໄລເມືອງເຟຣສໂນເທົ່ານັ້ນ.

ສິດທິສ່ວນຕົວ ແລະ ຄວາມປອດໄພຂອງລູກທ່ານມີຄວາມສຳຄັນທີ່ສຸດ ແລະ ພວກເຮົາຫວັງວ່າຈົດໝາຍສະບັບນີ້ ຈະຊ່ວຍໃຫ້ທ່ານເຂົ້າໃຈເຖິງຈຸດປະສົງຂອງບົດຮຽນບັນທຶກວີດີໂອດັ່ງກ່າວ. ຂໍຂອບໃຈທີ່ທ່ານໄດ້ຂຽນແບບຟອມໃບອານຸຍາດຂ້າງລຸ່ມນີ້.

ດ້ວຍຄວາມນັບຖື,

Dr. Jeanie Behrend, FAST ຜູ້ປະສານງານ

Kremen School of Education and Human Development

---

## ແບບຟອມໃບອະນຸຍາດ

ຊື່ນັກຮຽນ ________________________________ ໂຮງຮຽນ/ນາຍຄຣູ ______________________________________

ຂ້າພະເຈົ້າພໍ່ແມ່/ຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍຂອງນັກຮຽນຜູ້ມີຊື່ຂ້າງເທິງນີ້. ຂ້າພະເຈົ້າໄດ້ຮັບ ແລະ ໄດ້ອ່ານຈົດໝາຍຂອງທ່ານກ່ຽວກັບນັກຮຽນອົບຮົມຄຣູຂອງໂຮງຮຽນມະຫາວິທຍາໄລໃນຫ້ອງຮຽນຂອງລູກຂ້າພະເຈົ້າ ແລະ ກໍ່ເຫັນດີນຳດັ່ງນີ້:

ຂ້າພະເຈົ້າ **ອະນຸຍາດ** ໃຫ້ລູກຂອງຂ້າພະເຈົ້າຮ່ວມປະກອບສ່ວນເຂົ້າໃນການຖ່າຍທຳວີດີໂອ ແລະ ກໍ່ເຂົ້າໃຈວ່າຊື່ຂອງ ລູກຂ້າພະເຈົ້າຈະບໍ່ໄດ້ບັນທຶກລົງໃນເອກກະສານປະກອບການບັນທຶກວີດີໂອໃດໆ ທັງສິ້ນ.

☐ ຂ້າພະເຈົ້າ **ບໍ່ອະນຸຍາດ** ໃຫ້ລູກຂ້າພະເຈົ້າປະກອບສ່ວນເຂົ້າໃນການບັນທຶກວີດີໂອ, ແລະ ກໍ່ເຂົ້າໃຈວ່າລາວຈະໄດ້ນັ່ງລໍຖ້າຢູ່ຂ້າງນອກການບັນທຶກວີດີໂອຕ່າງໆ.

_______________________________________________

ລາຍເຊັນພໍ່ແມ່ຫລືຜູ້ປົກຄອງ ວັນທີ